ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຄັງເງິນແຫ່ງຊາດ

ເລກທີ 0800/ຄງຊ

ນະຄອນຫຼວງວຽງຈັນ, ວັນທີ 04 ມີນາ 2021

# ສັນຍາ

## ວ່າດ້ວຍການໃຫ້ບໍລິການ ແລະ ການຈ່າຍດອກເບ້ຍເງິນຝາກ ປະຈໍາປີ 2021

## ລະຫວ່າງ

ຄັງເງິນແຫ່ງຊາດ, ກະຊວງການເງິນ ສໍານັກງານຕັ້ງຢູ່ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທລະສັບໝາຍເລກ: 021 415950, ໂທລະສານ 021 412412 ຊຶ່ງໃນສັນຍານີ້ເອີ້ນວ່າ **"ຄັງເງິນແຫ່ງຊາດ".**

**ແລະ**

ທະນາຄານສົ່ງເສີມກະສິກໍາ, ສໍານັກງານຕັ້ງຢູ່ຖະໜົນໄກສອນພົມວິຫານ, ບ້ານພະຂາວ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ, ໂທລະສັບໝາຍເລກ: 021 713060, ໂທລະສານ 021 713061 ໃນສັນຍານີ້ເອີ້ນວ່າ **"ທສກ"**

ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານບໍລິການ ລາຍຮັບ-ລາຍຈ່າຍ ຜ່ານລະບົບທະນາຄານ ໃຫ້ມີປະສິດທິຜົນ; ຄູ່ສັນຍາທັງສອງຝ່າຍໄດ້ຕົກລົງເຫັນດີເປັນເອກະພາບກັນ ເຮັດສັນຍາ ວ່າດ້ວຍການໃຫ້ບໍລິການ ແລະ ການຈ່າຍດອກເບ້ຍເງິນຝາກ ປະຈໍາປີ 2021 ໃນຂອບເຂດທົ່ວປະເທດ ໂດຍມີເນື້ອໃນລະອຽດດັ່ງນີ້:

**ມາດຕາ 1 : ຈຸດປະສົງ**

ສັນຍາສະບັບນີ້ສ້າງຂຶ້ນເພື່ອກໍານົດ ລະບຽບການ, ກົນໄກ, ຂັ້ນຕອນ, ວິທີການ ຂອງການໃຫ້ບໍລິການ ແລະ ການຄິດໄລ່ດອກເບ້ຍເງິນຝາກ ທີ່ຕິດພັນກັບການດໍາເນີນທຸລະກໍາທາງການເງິນລະຫວ່າງ ຄັງເງິນແຫ່ງຊາດ ແລະ ທສກ ໃນຂອບເຂດທົ່ວປະເທດ.

**ມາດຕາ 2 : ການໃຫ້ບໍລິການຂອງທະນາຄານ**

**2.1 ຮູບແບບການບໍລິການ**

- **"ທສກ"** ເຫັນດີສະໜອງການໃຫ້ບໍລິການໂດຍກໍານົດເອົາບັນຊີເງິນຝາກກະແສລາຍວັນ ເພື່ອຮອງຮັບການບໍລິການໃຫ້ຄັງເງິນແຫ່ງຊາດ ໃນການຕິດຕາມ ແລະ ກວດກາ ການເຄື່ອນໄຫວທຸລະກໍາທາງດ້ານການເງິນ ເປັນຕົ້ນແມ່ນການເຄື່ອນໄຫວຮັບ, ການເຄື່ອນໄຫວຈ່າຍ ແລະ ການບໍລິການໂອນເງິນໃນຮູບແບບຕ່າງໆ;
- **"ທສກ"** ເຫັນດີໃຫ້ອໍານວຍຄວາມສະດວກໃນການບໍລິການໂດຍຈະກໍານົດປ່ອງບໍລິການສະເພາະ ໃຫ້ແກ່ຄັງເງິນແຫ່ງຊາດ ໃນຂອບເຂດທົ່ວປະເທດ;
- ໃນຕອນເຊົ້າຂອງແຕ່ລະມື້ **"ທສກ"** ຈະສົ່ງຕາຕະລາງລາຍງານການເຄື່ອນໄຫວໃນມື້ຜ່ານມາ ຂອງບັນຊີເງິນຝາກຄັງເງິນແຫ່ງຊາດໃນຂອບເຂດທົ່ວປະເທດ ທີ່ເປີດບັນຊີຢູ່ **"ທສກ"** ໃຫ້ຄັງເງິນແຫ່ງຊາດ ຜ່ານລະບົບເອເລັກໂຕນິກຕາມແບບຟອມທີ່ຄັງເງິນແຫ່ງຊາດກໍານົດ. ໃນກໍລະນີ ທີ່ມີການເປີດບັນຊີໃໝ່ ແລະ ປິດບັນຊີທີ່ບໍ່ໄດ້ນໍາໃຊ້ແລ້ວ **"ທສກ"** ຈະເພີ່ມເຂົ້າ ແລະ ເອົາອອກ ໃນຕາຕະລາງດັ່ງກ່າວ ແລ້ວແຈ້ງໃຫ້ຄັງເງິນແຫ່ງຊາດເພື່ອຊາບ;

- **"ທສກ"** ເຫັນດີໃຫ້ບໍລິການດ້ວຍລະບົບ APB Online Statement ເພື່ອໃຫ້ຄວາມສະດວກໃນການຕິດຕາມ ລະບົບລາຍງານການເຄື່ອນໄຫວທຸລະກຳທາງການເງິນຜ່ານລະບົບ ທສກ ຢ່າງມີປະສິດທິຜົນ;
- **"ທສກ"** ເຫັນດີພິມບັນຊີສຳຮອງ (statement) ປະຈຳວັນ ພ້ອມທັງເອກະສານການເຄື່ອນໄຫວຂອງແຕ່ລະບັນຊີທີ່ມີລາຍການເກີດຂຶ້ນ ໃຫ້ **"ຄັງເງິນແຫ່ງຊາດ"** ເພື່ອບັນທຶກບັນຊີ, ສົມທຽບ, ກວດກາຄວາມຖືກຕ້ອງເຊິ່ງກັນ ແລະ ກັນ; ນອກຈາກນັ້ນ **"ທສກ"** ຈະພິມບັນຊີສຳຮອງປະຈຳເດືອນ ໃນແຕ່ລະເດືອນສົ່ງໃຫ້ຄັງເງິນແຫ່ງຊາດ ໃນແຕ່ລະຂັ້ນ.

**2.2 ການຈ່າຍດອກເບ້ຍເງິນຝາກ**

- **"ທສກ"** ຕົກລົງຈ່າຍດອກເບ້ຍເງິນຝາກກະແສລາຍວັນ ຂອງຄັງເງິນແຫ່ງຊາດ ໃນຂອບເຂດທົ່ວປະເທດ ໃຫ້ **"ຄັງເງິນແຫ່ງຊາດ"** ຕາມຈຳນວນບັນຊີທັງໝົດທີ່ຄັງເງິນແຫ່ງຊາດຄຸ້ມຄອງ (ລາຍລະອຽດມີເອກະສານຊ້ອນທ້າຍ) ດ້ວຍອັດຕາດອກເບ້ຍຄື:
  - ສະກຸນເງິນກີບເທົ່າກັບ 0,2% ຕໍ່ປີ;
  - ສະກຸນເງິນໂດລາສະຫະລັດ ແລະ ສະກຸນເງິນບາດເທົ່າກັບ 0,03% ຕໍ່ປີ;
- **"ທສກ"** ຈະໂອນດອກເບ້ຍເຂົ້າບັນຊີເງິນຝາກໃຫ້ **"ຄັງເງິນແຫ່ງຊາດ"** ປີລະ 04 ຄັ້ງ (ເປັນໄຕມາດ) ຄື: ໃນວັນທີ 31 ມີນາ 2021, 30 ມິຖຸນາ 2021, 30 ກັນຍາ 2021 ແລະ 31 ທັນວາ 2021 ຕາມບັນຊີໝາຍເລກລຸ່ມນີ້:
  - ສະກຸນເງິນກີບ ໝາຍເລກ: 0000200110029678
  - ສະກຸນເງິນບາດ ໝາຍເລກ: 0000200110029683
  - ສະກຸນເງິນໂດລາ ໝາຍເລກ: 0000200110029699

**ມາດຕາ 3 : ການຄິດໄລ່ຄ່າທຳນຽມ**

**3.1 "ທສກ" ຕົກລົງເຫັນດີຍົກເວັ້ນຄ່າທຳນຽມບໍລິການ ດັ່ງນີ້:**

- ຍົກເວັ້ນຄ່າທຳນຽມບໍລິການ ທີ່ໂອນລະຫວ່າງບັນຊີຄັງເງິນແຫ່ງຊາດ ຫາ ຄັງເງິນແຫ່ງຊາດ, ບັນດາຫົວໜ່ວຍງົບປະມານ (ຂັ້ນສູນກາງ, ຂັ້ນແຂວງ ແລະ ເມືອງ) ພາຍໃນ **"ທສກ"** ໃນຂອບເຂດທົ່ວປະເທດ;
- ຄ່າປຶ້ມແຊັກຂອງ **"ທສກ"** ສຳນັກງານໃຫຍ່ ແລະ ສາຂາທົ່ວປະເທດແມ່ນບໍລິການໃຫ້ຟຣີ (ບໍ່ເສຍຄ່າທຳນຽມ);
- ຍົກເວັ້ນຄ່າທຳນຽມທີ່ຕິດພັນກັບການໃຫ້ບໍລິການພາຍໃນຂອງ **"ທສກ"** ທັງໝົດ;
- ຍົກເວັ້ນຄ່າທຳນຽມການໂອນເງິນມາຈາກຕ່າງທະນາຄານ (ຂາເຂົ້າ) ຜ່ານຊ່ອງທາງ ACH/RTGS/NPS.

**3.2 "ທສກ" ຕົກລົງເຫັນດີເກັບຄ່າທຳນຽມບໍລິການທີ່ຕິດພັນກັບພາຍນອກດັ່ງນີ້:**

- **"ທສກ"** ຈະເກັບຄ່າທຳນຽມນຳປາຍທາງໃນກໍລະນີທີ່ **"ຄັງເງິນແຫ່ງຊາດ"** ຊຳລະສະສາງໃຫ້ລູກຄ້າຂອງ ທສກ ຄື: ພາກສ່ວນ ບໍລິສັດ, ຫ້າງຮ້ານ, ບຸກຄົນທົ່ວໄປ, ໂຄງການ, ສະຖານທູດ, ອົງການສາກົນຕ່າງໆ ແລະ ອື່ນໆ;
- **"ທສກ"** ຈະເກັບຄ່າທຳນຽມນຳຕົ້ນທາງ ກໍລະນີລູກຄ້າຂອງ ທສກ ຄື: ພາກສ່ວນ ບໍລິສັດ, ຫ້າງຮ້ານ, ບຸກຄົນທົ່ວໄປ, ໂຄງການ, ສະຖານທູດ, ອົງການສາກົນຕ່າງໆ ແລະ ອື່ນໆ ໂອນເຂົ້າບັນຊີ **"ຄັງເງິນແຫ່ງຊາດ"**;
- **"ທສກ"** ຈະເກັບຄ່າທຳນຽມກັບ **"ຄັງເງິນແຫ່ງຊາດ"** ກໍລະນີມີຄ່າທຳນຽມບໍລິການທີ່ຕິດພັນກັບພາກສ່ວນພາຍນອກ ເປັນຕົ້ນ ຄ່າທຳນຽມໂອນເງິນ (ຂາອອກ) ຂອງ **"ຄັງເງິນແຫ່ງຊາດ"** ຜ່ານລະບົບ ACH/RTGS/NPS, ຄ່າສາຍໂອນເງິນຕ່າງປະເທດ ແລະ ລາຍການອື່ນໆ ຕາມຈຳນວນຄ່າທຳນຽມທີ່ພາກສ່ວນພາຍນອກເກັບນຳ **"ທສກ"** (ຖ້າມີ).

**ມາດຕາ 4 : ສິດ ແລະ ພັນທະຂອງ "ທສກ"**

- "ທສກ" ຍິນດີໃຫ້ບໍລິການແກ່ "ຄັງເງິນແຫ່ງຊາດ" ດ້ວຍຄວາມຮັບຜິດຊອບສູງ;
- "ທສກ" ມີໜ້າທີ່ສະໜອງສະພາບຄ່ອງໃຫ້ພຽງພໍກັບຄວາມຕ້ອງການນຳໃຊ້ເງິນຂອງຄັງເງິນແຫ່ງຊາດ ໃນແຕ່ລະຄັ້ງ;
- ໃນກໍລະນີ ເກີດມີການປ່ຽນແປງດ້ານບໍລິການ "ທສກ" ຕ້ອງແຈ້ງໃຫ້ ຄັງເງິນແຫ່ງຊາດ ຊາບຢ່າງໜ້ອຍ 03 ວັນລັດຖະການ;
- "ທສກ" ຈະຮັບຜິດຊອບຈ່າຍດອກເບ້ຍໃຫ້ "ຄັງເງິນແຫ່ງຊາດ" ຕາມອັດຕາດອກເບ້ຍທີ່ໄດ້ຕົກລົງກັນໃນ ມາດຕາ 02 ຂໍ້ 2.2 ໂດຍຖືເອົາຍອດເງິນເຫຼືອບັນຊີໃນແຕ່ລະທ້າຍມື້ເປັນພື້ນຖານໃນການຄິດໄລ່ດອກເບ້ຍ;
- ກໍລະນີທີ່ "ຄັງເງິນແຫ່ງຊາດ"ມີການເປີດບັນຊີເງິນຝາກກະແສລາຍວັນ ເພີ່ມໃໝ່ ໃນປີ 2021 ໃນຂອບເຂດທົ່ວປະເທດ ທາງ "ທສກ" ຈະໄດ້ສັງລວມ ແລະ ຄິດໄລ່ດອກເບ້ຍເພີ່ມໃຫ້ໃນປີ 2022 ເປັນຕົ້ນໄປ;
- "ທສກ" ຕ້ອງປະສານສົມທົບ ກັບ ຄັງເງິນແຫ່ງຊາດ ໃນການຈັດຕັ້ງປະຕິບັດວຽກງານ ເພື່ອຮັບປະກັນໃຫ້ໄດ້ປະສິດທິຜົນສູງ.

**ມາດຕາ 5 : ສິດ ແລະ ພັນທະຂອງ "ຄັງເງິນແຫ່ງຊາດ"**

- "ຄັງເງິນແຫ່ງຊາດ" ຕ້ອງຮັກສາຍອດເຫຼືອເງິນຕ່ຳສຸດໃນບັນຊີຂອງແຕ່ລະບັນຊີຕາມທີ່ໄດ້ກຳນົດໄວ້ໃນລະບຽບການຂອງ "ທສກ" ວາງອອກໃນແຕ່ລະໄລຍະ;
- ກໍລະນີ "ຄັງເງິນແຫ່ງຊາດ" ຕ້ອງການໂອນເງິນອອກເປັນວົງເງິນສູງ (100 ຕື້ກີບ ຂຶ້ນໄປ) ກະລຸນາແຈ້ງ "ທສກ" ລ່ວງໜ້າກ່ອນຢ່າງໜ້ອຍ 1 ວັນລັດຖະການ;
- ຄັງເງິນແຫ່ງຊາດຕ້ອງປະສານສົມທົບ ກັບ "ທສກ" ໃນການຈັດຕັ້ງປະຕິບັດວຽກງານ ເພື່ອຮັບປະກັນໃຫ້ໄດ້ປະສິດທິຜົນສູງ.

**ມາດຕາ 6 : ການດັດແປງເນື້ອໃນສັນຍາ**

- ໃນກໍລະນີມີການປ່ຽນແປງອັດຕາດອກເບ້ຍບັນຊີເງິນຝາກ ແລະ ຄ່າທຳນຽມບໍລິການ "ທສກ" ຕ້ອງແຈ້ງໃຫ້ "ຄັງເງິນແຫ່ງຊາດ" ຮັບຊາບເພື່ອໃຫ້ມີການປຶກສາຫາລືເປັນເອກະພາບກັນກ່ອນຈະມີການປະຕິບັດ;
- ທຸກເນື້ອໃນ ແລະ ເງື່ອນໄຂທີ່ລະບຸໄວ້ ໃນສັນຍາສະບັບນີ້ ບໍ່ມີການປ່ຽນແປງ ຈາກຝ່າຍໃດໜຶ່ງ ໂດຍພາລະການ, ເວັ້ນເສຍແຕ່ທັງສອງຝ່າຍໄດ້ປຶກສາຫາລື ແລະ ຕ້ອງໄດ້ຮັບການຕົກລົງເຫັນດີຂອງຄູ່ສັນຍາທັງສອງຝ່າຍຢ່າງເປັນລາຍລັກອັກສອນ ແລະ ມີການລົງລາຍເຊັນຮັບຮອງຂອງຄູ່ສັນຍາທັງສອງຝ່າຍຢ່າງຖືກຕ້ອງຕາມກົດໝາຍ.

**ມາດຕາ 7 : ການຍົກເລີກສັນຍາ**

ຄູ່ສັນຍາຝ່າຍໃດຝ່າຍໜຶ່ງສາມາດຍົກເລີກສັນຍາໄດ້ກ່ອນກຳນົດຖ້າຫາກເຫັນວ່າມີການລະເມີດເງື່ອນໄຂທີ່ໄດ້ລະບຸໄວ້ໃນສັນຍາສະບັບນີ້ ແຕ່ຕ້ອງໄດ້ມີການແຈ້ງເຈດຈຳນົງຢ່າງເປັນລາຍລັກອັກສອນໃຫ້ຄູ່ສັນຍາອີກຝ່າຍຮັບຊາບລ່ວງໜ້າຢ່າງໜ້ອຍ 07 ວັນລັດຖະການ.

**ມາດຕາ 8 : ການແກ້ໄຂຂໍ້ຂັດແຍ່ງ**

ຄູ່ສັນຍາທັງສອງຝ່າຍເຫັນດີໃຫ້ການຮ່ວມມືເຊິ່ງກັນ ແລະ ກັນ, ປຶກສາຫາລືເປັນປົກກະຕິ, ສະຫຼຸບຕີລາຄາຈຸດດີ ແລະ ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດສັນຍາຕົວຈິງໃຫ້ມີປະສິດທິຜົນ ພ້ອມກັນຊອກຫາວິທີແກ້ໄຂບັນຫາຄົງຄ້າງຢ່າງທັນການເພື່ອໃຫ້ການບໍລິການມີຄວາມສະດວກ, ວ່ອງໄວ ແລະ ທັນສະໄໝ.

ໃນກໍລະນີມີຂໍ້ຂັດແຍ່ງເກີດຂຶ້ນ ໃນການຈັດຕັ້ງປະຕິບັດສັນຍາສະບັບນີ້ຄູ່ສັນຍາທັງສອງຝ່າຍຕ້ອງປຶກສາຫາລືກັນແກ້ໄຂດ້ວຍສັນຕິວິທີ, ກໍລະນີບໍ່ສາມາດຕົກລົງກັນໄດ້ການແກ້ໄຂດັ່ງກ່າວຕ້ອງດຳເນີນການຕາມຂະບວນການຍຸຕິທຳຂອງ ສປປລາວ.

**ມາດຕາ 9 : ຂໍ້ກຳນົດສຸດທ້າຍ**

ຄູ່ສັນຍາທັງສອງຝ່າຍເຫັນດີເປັນເອກະພາບ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງທີ່ໄດ້ລະບຸໄວ້ໃນສັນຍາສະບັບນີ້ ດ້ວຍຄວາມຮັບຜິດຊອບສູງເພື່ອຕອບສະໜອງການບໍລິການທີ່ດີແລະທັງເປັນການປະກອບສ່ວນສ້າງລາຍຮັບໃຫ້ແກ່ງົບປະມານແຫ່ງລັດ ຕາມແນວທາງຂອງພັກ ແລະ ລັດຖະບານໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ສັນຍາສະບັບນີ້ມີ 10 ມາດຕາ 04 ໜ້າ ແລະ ໄດ້ສ້າງຂຶ້ນເປັນ 02 ສະບັບ ຊຶ່ງມີເນື້ອໃນອັນດຽວກັນມີຄວາມໝາຍຄືກັນທາງດ້ານກົດໝາຍ, ໂດຍມອບໃຫ້ **"ຄັງເງິນແຫ່ງຊາດ"** 01 ສະບັບ ແລະ **"ທສກ"** ຮັກສາໄວ້ 01 ສະບັບ, ຄູ່ສັນຍາທັງສອງຝ່າຍໄດ້ກວດກາຜ່ານເນື້ອໃນສັນຍານີ້ໂດຍຕະຫຼອດ ແລະ ຮັບຮອງວ່າຖືກຕ້ອງຕາມຈຸດປະສົງແລ້ວຈຶ່ງພ້ອມກັນລົງລາຍເຊັນໄວ້ເປັນຫຼັກຖານ.

**ມາດຕາ 10 : ຜົນສັກສິດ ແລະ ການສິ້ນສຸດຂອງສັນຍາ**

ສັນຍາສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ຮ່ວມກັນຢ່າງຖືກຕ້ອງເປັນຕົ້ນໄປ; ຊຶ່ງກຳນົດເວລາຂອງສັນຍາສະບັບນີ້ເລີ່ມແຕ່ວັນທີ 01 ມັງກອນ ເຖິງວັນທີ 31 ທັນວາ 2021 ແລະ ຈະສິ້ນສຸດລົງພາຍຫຼັງ ແຕ່ລະຝ່າຍໄດ້ປະຕິບັດສັນຍາສະບັບນີ້ ຕໍ່ກັນຢ່າງຄົບຖ້ວນ.

| | |
|---|---|
| **ກະຊວງການເງິນ** | **ຜູ້ອຳນວຍການໃຫຍ່** |
| **ຫົວໜ້າຄັງເງິນແຫ່ງຊາດ** | **ທະນາຄານ ສົ່ງເສີມກະສິກຳ** |
| ນ.ວັນພອນ ພົມມະສອນ | ຄຳສິງ ແສງແກ້ວມະຫາວົງ |